SISAVANH et al. (2023). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 9. Issue 4. Oct – Dec 2023. Page 135 – 146

# ຜົນກະທົບຂອງໂລກພະຍາດອັກເສບປອດສາຍພັນໃໝ່ ໄວລັດໂຄໂລນາ (Covid-19) ຕໍ່ກັບທຸລະກິດບໍລິການໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ

**ອໍລະໄທ ສີສະຫວັນ*, ສັງທອງ ສີຟອງໄຊ, ຈໍາປາ ລັດຕະນະສຸວັນນະຜົນ, ສົມຄວນ ໄຊຍະວົງ, ຂັນທະລີ ມີໄຊກອນ**

*ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

***ຜູ້ຕິດຕໍ່ພົວພັນ:**

*ອໍລະໄທ ສີສະຫວັນ, ພາກວິຊາການທ່ອງທ່ຽວ ແລະ ການໂຮງແຮມ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ, ໂທ: +856 20 28669941, ອີເມວ: Orlathai.ssv69@gmail.com*

***ຂໍ້ມູນບົດຄວາມ:***

*ການສົ່ງບົດ: 27 ມິຖຸນາ 2023*
*ການປັບປຸງ: 22 ກັນຍາ 2023*
*ການຕອບຮັບ: 10 ຕຸລາ 2023*

## ບົດຄັດຫຍໍ້

ການຄົ້ນຄວ້າວິໄຈນີ້ມີຈຸດປະສົງໃນການຄົນຄວ້າວິໄຈເພື່ອ: 1) ສຶກສາຜົນກະທົບຂອງໂລກລະບາດພະຍາດອັກເສບປອດສາຍພັນໃໝ່ໄວລັດໂຄໂລນາ (Covid-19) ຕໍ່ກັບທຸລະກິດບໍລິການໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ. 2) ສຶກສາຄວາມຄິດເຫັນຂອງຜູ້ປະກອບທຸລະກິດບໍລິການຕໍ່ການປະຕິບັດນະໂຍບາຍຂອງລັດຖະບານພາຍຫຼັງເກີດໂລກລະບາດພະຍາດອັກເສບປອດສາຍພັນໃໝ່ໄວລັດໂຄໂລນາ (Covid-19). 3)ສະເໜີແນວທາງໃນການປັບຕົວຂອງທຸລະກິດບໍລິການໃນນະຄອນຫຼວງພະບາງແຂວງຫຼວງພະບາງ. ວິທີການສຶກສາແມ່ນເປັນແບບປະລິມານ, ກຸ່ມຕົວຢ່າງແມ່ນຜູ້ປະກອບການທຸລະກິດບໍລິການທາງການທ່ອງທ່ຽວ ພາຍໃນນະຄອນຫຼວງພະບາງ ທີ່ຄຳນວນໄດ້ຈຳນວນ 283 ຄົນ. ເຄື່ອງມືທີ່ໃຊ້ເຂົ້າໃນການເກັບກຳ ແລະ ຮວບຮວມຂໍ້ມູນແມ່ນນຳໃຊ້ແບບສອບຖາມ ໂດຍການວິເຄາະຂໍ້ມູນດ້ວຍໂປຣແກຣມສຳເລັດຮູບ ແລະ ວິເຄາະເນື້ອໃນ ເຊິ່ງສະຖິຕິທີ່ໃຊ້ໃນການສຶກສາຄົ້ນຄວ້າວິໄຈໄດ້ແກ່: ຄ່າຄວາມຖີ່, ຄ່າສ່ວນຮ້ອຍ ແລະ ຄ່າຜັນປ່ຽນມາດຕະຖານ.

ຜົນຈາກການຄົ້ນຄວ້າພົບວ່າ: ຜູ້ໃຫ້ຂໍ້ມູນສ່ວນໃຫຍ່ແມ່ນເພດຊາຍ, ມີອາຍຸລະຫວ່າງ 30-40 ປີ, ມີລະດັບການສຶກສາປະລິນຍາຕີ, ຮູບແບບການປະກອບທຸລະກິດສ່ວນບຸກຄົນ, ຂະໜາດທຸລະກິດຂະໜາດນ້ອຍ, ແຫຼ່ງເງິນທຶນຫຼັກໃນການປະກອບທຸລະກິດແມ່ນໃຊ້ເງິນທຶນສ່ວນຕົວ, ປະເພດທຸລະກິດການບໍລິການແມ່ນທຸລະກິດທີ່ພັກເຊົາ, ມີໄລຍະເວລາໃນການດຳເນີນທຸລະກິດຕໍ່າກວ່າ 5-10 ປີ, ລາຍໄດ້ສະເລ່ຍໃນການປະກອບທຸລະກິດຕໍ່ເດືອນ (ກ່ອນການລະບາດຂອງພະຍາດ Covid-19) ແມ່ນ 10,000,000-50,000,000 ກີບ ແລະ ລາຍໄດ້ສະເລ່ຍໃນການປະກອບທຸລະກິດຕໍ່ເດືອນ (ພາຍຫລັງການລະບາດຂອງພະຍາດ Covid-19) ແມ່ນ ຕໍ່າກວ່າ 10,000,000 ກີບ. ຜົນຈາກການຄົ້ນຄວ້າກ່ຽວກັບຜົນກະທົບຂອງໂລກພະຍາດອັກເສບປອດສາຍພັນໃໝ່ ໄວລັດໂຄໂລນາ (Covid-19) ຕໍ່ກັບທຸລະກິດບໍລິການໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ພົບວ່າ: ໂດຍລວມແລ້ວທຸລະກິດບໍລິການໃນນະຄອນຫຼວງພະບາງໄດ້ຮັບຜົນກະທົບຈາການລະບາດຂອງໂລກພະຍາດອັກເສບປອດສາຍພັນໃໝ່ (Covid-19) ແມ່ນຢູ່ໃນລະດັບຫຼາຍ ໃນນັ້ນຜົນກະທົບໃນດ້ານສັງຄົມ ຢູ່ໃນລະດັບຫຼາຍ ແລະ ຜົນກະທົບໃນດ້ານເສດຖະກິດ ຢູ່ໃນລະດັບຫຼາຍ. ຜົນຈາກການຄົ້ນຄວ້າກ່ຽວກັບການຄວາມຄິດເຫັນຂອງຜູ້ປະກອບການຕໍ່ການປະຕິບັດນະໂຍບາຍຂອງລັດຖະບານເພື່ອຫຼຸດຜ່ອນຜົນກະທົບຂອງການລະບາດໂລກພະຍາດອັກເສບປອດສາຍພັນໃໝ່ (Covid-19) ພົບວ່າ: ໂດຍລວມແລ້ວທຸລະກິດບໍລິການໃນນະຄອນຫຼວງພະບາງມີຄວາມຄິດເຫັນຕໍ່ການປະຕິບັດນະໂຍບາຍຂອງລັດຖະບານເພື່ອຫຼຸດຜ່ອນຜົນກະທົບຂອງການລະບາດໂລກພະຍາດອັກເສບປອດສາຍພັນໃໝ່ (Covid-19) ແມ່ນຢູ່ໃນລະດັບຫຼາຍ. ສຳລັບແນວທາງໃນການປັບຕົວຂອງທຸລະກິດບໍລິການໃນອານາຄົດ, ທຸກພາກສ່ວນຈະຕ້ອງຮ່ວມມືກັນ ທັງພາກລັດ ແລະ ເອກະຊົນທີ່ຕ້ອງໄດ້ມີການຮ່ວມມືກັນໃນການປະຕິບັດນະໂຍບາຍ ແລະ ລະບຽບຕ່າງໆເພື່ອຫຼຸດຜ່ອນຜົນກະທົບ, ຮ່ວມກັນໃນສ້າງລະບຽບ ແລະ ນະໂຍບາຍທີ່ສອດຄ່ອງ ແລະ ເຂົ້າເຖິງບັນດາທຸລະກິດຕ່າງໆໃຫ້ເໝາະສົມ.

**ຄຳສັບສຳຄັນ:** *ຜົນກະທົບ, ໂຄວິດ-19, ທຸລະກິດບໍລິການ, ການປັບຕົວ.*

# The Impacts of Covid-19 Pandemic to Hospitality Business in Luang Prabang City

**Orlathai SISAVANH*, Sangthong SIFONGXAY, Champa LATTANASOUVANHNAPHONH, Somkhuan SAYYAVONG, Khanthaly MIXAYKONE**

*Department of Tourism Management, Faculty of Economics and Tourism, Souphanouvong University, Lao PDR*

***Correspondence:***

*Orlathai SISAVANH, Tourism and Hotel Department, Faculty of Economic and Tourism, Souphanouvong University,*

*Tel: 0202866994, Email: Orlathai.ssv69@gmail.com,*

***Article Info:***

*Submitted: Jun 27, 2023*

*Revised: Sep 22, 2023*

*Accepted: Oct 10, 2023*

## Abstract

The impact of the novel coronavirus pneumonia (Covid-19) on the tourism service company in Luang Prabang, according to research. The project aims to: 1) investigate the influence of the novel coronavirus pneumonia pandemic (Covid-19) on the service industry in Luang Prabang city. 2) To examine how service industry owners feel about the application of government regulations following the unique coronavirus pneumonia epidemic (Covid-19). 3) Suggest policies for the reorganization of service enterprises in Luang Prabang. The study method is quantitative, the sample group is 283 tourism service business operators in Luang Prabang city. Data was collected through a set of questionnaires that were distributed among 385 Entrepreneurs in the tourism industry. The obtained data was then analyzed by using the Statistical Package of the Social Sciences Program. According to descriptive statistics, the data analysis tools used were percentage, mean and standard deviation.

The research's findings showed that the majority of informants are male, between the ages of 30 and 40, with a bachelor's degree, a personal business model, a small business size, the primary source of funding for the business being personal funds, the type of service business being a temporary business, the duration of the business being less than five to ten years, and the average monthly revenue in the business (prior to the Covid-19 outbreak) being between 10,000,000-50,000,000 kip. After the Covid-19 epidemic, the average monthly business is less than 10,000,000 kip. The study's findings on the new corona virus's (Covid-19) effect on the service industry in Luang Prabang revealed that: overall, the service industry in Luang Prabang has been adversely impacted by the epidemic of the new corona virus (Covid-19) on a large scale, with both the social and economic effects being severe. According to the study's findings, service businesses in Luang Prabang have a generally positive opinion of the government's implementation of its policy to lessen the effects of the new pneumonitis epidemic (Covid-19). The public and private sectors must work together to implement different policies and regulations to lessen the impact, jointly develop consistent regulations and policies, and appropriately grant access to various businesses in order to adapt the service industry in the future.

**Keywords:** *Impact, Covid-19, Hospitality, Adapt.*

## 1. ພາກສະເໜີ

ໃນທ້າຍປີ 2019 ທີ່ຜ່ານມາໄດ້ເກີດພະຍາດໂລກລະບາດປອດອັກເສບຢູ່ທີ່ແຂວງອູ່ຫັ້ນ ປະເທດຈີນ ເຊິ່ງເປັນໂລກລະບາດທີ່ບໍ່ເຄີຍມີມາກ່ອນເຮັດໃຫ້ບໍ່ທັນມີຢາທີ່ຈະສາມາດປິ່ນປົວໄດ້, ປະຈຸບັນເຮັດໃຫ້ແຜ່ລາມໄປທົ່ວໂລກ 197 ປະເທດ, ເນື່ອງຈາກເປັນພະຍາດທີ່ສາມາດຕິດຈາກຄົນສູ່ຄົນດ້ວຍການສຳພັດ, ໄອ, ຈາມ ກໍ່ສາມາດແຜ່ເຊື້ອສູ່ຄົນອື່ນໄດ້ເຮັດໃຫ້ການແຜ່ກະຈາຍຂອງໂລກລະບາດ (Covid-19) ໃນປະຈຸບັນກໍຍັງບໍ່ທັນສາມາດຄວບຄຸມໄດ້ ຈາກການລາຍງານຂອງ WHO (ວັນທີ 2 ເມສາ 2020) ມີຜູ້ຕິດເຊື້ອທັງໝົດທົ່ວໂລກ 910,323 ຄົນ, ມີຜູ້ເສຍຊີວິດແລ້ວ 45,496 ຄົນ. ຈົນມາຮອດວັນທີ 17 ເມສາ 2021 ແມ່ນມີຄົນຕິດເຊື້ອເພີ່ມຂຶ້ນໃນ 219 ປະເທດ, ຜູ້ຕິດເຊື້ອທັງໝົດ 140,497,495 ຄົນ, ເສຍຊີວິດທັງໝົດ 3,011,411 ຄົນ, ແລະ ປິ່ນປົວຫາຍດີ 119,387,912 ຄົນ, ປະເທດທີ່ມີການແຜ່ລະບາດ ແລະ ຕິດເຊື້ອ (Covid-19) ຫຼາຍທີ່ສຸດໃນໂລກ ແມ່ນປະເທດສະຫະລັດອາເມລິກາ ເປັນອັນດັບທີ 1 ມີຜູ້ຕິດເຊື້ອສະສົມ 32,302,511 ຄົນ, ອັນດັບທີ 2 ແມ່ນປະເທດອິນເດຍ ຈຳນວນຜູ້ຕິດເຊື້ອທັງໝົດ 14,521,683 ຄົນ (ຂໍ້ມູນຈາກຄະນະສະເພາະກິດເພື່ອການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ Covid-19 ວັນທີ 17 ເມສາ 2021 www.covid19.gov.la ). ພາຍຫຼັງທີ່ມີການແຜ່ລະບາດກໍໄດ້ມີການຄົ້ນຄວ້າ ແລະ ຜະລິດວັກຊີນຫຼາຍປະເພດເພື່ອໃຊ້ປ້ອງກັນ ແລະ ຮັກສາໂລກດັ່ງກ່າວເຊັ່ນ: ໂມເດີຣນາ (Moderna), ຊີໂນຟາມ (Sinopharm), ໄຟເຊີ-ໄບໂອເທັກ (Pfizer-Biontech), ແອສຕ້າຊີນີກາ (Astrazeneca), ຊີໂນແວັກ (Sinovac); ເຖິງໃນປະຈຸບັນໄດ້ຮັບວັກຊີນປ້ອງກັນແລ້ວກໍຕາມ ການແຜ່ລະບາດຂອງໂລກລະບາດໃນຄັ້ງນີ້ເຮັດໃຫ້ມີຜົນກະທົບໃນຫຼາຍໆດ້ານ ໂດຍສະເພາະດ້ານທຸລະກິດ, ແຮງງານ ແລະ ອື່ນໆ ເນື່ອງຈາກບໍ່ສາມາດດຳເນີນງານໄດ້. ສຳລັບ ສປປ ລາວ ກໍເປັນປະເທດໜຶ່ງທີ່ມີຊາຍແດນຕິດກັບປະເທດຈີນ ດັ່ງນັ້ນ, ພາຍຫຼັງໄດ້ຮັບຮູ້ຂ່າວກໍມີການເຝົ້າລະວັງ ແລະ ໃຊ້ມາດຕະການໃນການປ້ອງກັນໂລກດັ່ງກ່າວຈົນມາຮອດ ວັນທີ 24 ມີນາ 2020 ໄດ້ກວດພົບວ່າມີຄົນຕິດພະຍາດອັກເສບປອດ (Covid-19) 2 ຄົນ, ເປັນພະນັກງານນຳທ່ຽວ ແລະ ພະນັກງານໃນໂຮງແຮມ ຈຶ່ງເຮັດໃຫ້ມີການປິດບັນດາກິດຈະການຕ່າງໆທີ່ມີການພົວພັນຫຼາຍຄົນ ເນື່ອງຈາກມີຄວາມສ່ຽງໃນການແຜ່ພະຍາດ ຈົນມາຮອດໃນວັນທີ 1 ເມສາ 2020 ໃນປະເທດລາວມີຜູ້ຕິດເຊື້ອທັງໝົດ 10 ຄົນ, ແຕ່ຍັງບໍ່ທັນມີກໍລະນີທີ່ເສຍຊີວິດ. ໃນຮອບທີ 2 ແມ່ນເລີ່ມຕົ້ນຈາກເດືອນເມສາ 2021 ເປັນຕົ້ນມາ ຈົນມາເຖິງປະຈຸບັນໃນປະເທດລາວມີຜູ້ຕິດເຊື້ອຈຸລະໂລກສາຍພັນໃໝ່ (Covid-19) ທັງໝົດ 2,121 ຄົນ, ປິ່ນປົວຫາຍດີ 1,981 ຄົນ, ເສຍຊີວິດ 3 ຄົນ, ກຳລັງປິ່ນປົວ 137 ຄົນ (ຂໍ້ມູນຈາກຄະນະສະເພາະກິດເພື່ອການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດອັກເສບປອດ ຈາກເຊື້ອຈຸລະໂລກສາຍພັນໃໝ່ (Covid-19) ວັນທີ 1 ກໍລະກົດ 2021 www.covid19.gov.la ) ວິກິດການລະບາດຂອງເຊື້ອໂຄວິດ-19 ໃນຄັ້ງນີ້ບໍ່ພຽງແຕ່ເປັນແຕ່ບົດທົດສອບພາວະຄວາມເປັນຜູ້ນຳແຕ່ຍັງຮ່ວມໄປເຖິງທັກສະຄວາມຮູ້ ຄວາມສາມາດ ຄວາມຈິງໃຈ ແລະ ຄວາມໄວ້ວາງໃຈຂອງປະຊາຊົນທີ່ມີຕໍ່ລັດໃນການບໍລິຫານຈັດການເພື່ອຝ່າວິກິດ (Wendy, 2020) ມາດຕະການກັກກັນ (Quarantine Measures) ພາຍໃຕ້ກົດໝາຍລະຫວ່າງປະເທດ ແລະ ກົດໝາຍລາວຈຶ່ງຈຳເປັນນຳມາແກ້ໄຂບັນຫາການແຜ່ລະບາດໄວຣັດໂດຍອາດຈະມີການລະເມີດສິດເສລີພາບຂອງປະຊາຊົນເພື່ອໃຫ້ທຸກຄົນໄດ້ຮັບຄວາມປອດໄພໃນຊີວິດເຊິ່ງມຄ່າຫຼາຍກ່ວາເສລີພາບສ່ວນບຸກຄົນ. ດັ່ງນັ້ນ, ລັດຈຶ່ງຕ້ອງເລັ່ງຕັດສິນໃຈ ແລະ ປະເມີນຮອບດ້ານທີ່ແຂ່ງຂັນກັບເວລາທີ່ມີຢູ່ຢ່າງຈຳກັດແຕ່ແນວໃດກໍຕາມໃນການປະຕິບັດການຕັດສິນໃຈໃນເລື່ອງນີ້ມັນບໍ່ໄດ້ງ່າຍ. ສະນັ້ນທຸກມາດຕະການຂອງລັດຖະບານຄວນມາຈາກມຸມມອງ ແລະ ເຫດຜົນທີ່ມີປະສິດທິພາບໃນການປ້ອງກັນຄວບຄຸມ ການລະບາດຂອງເຊື້ອໂຄວິດ-19 ໄດ້. ຫາກລັດຖະບານອະທິບາຍວ່າມາດຕະການທີ່ໃຊ້ນັ້ນເປັນມາດຕະການທີ່ຈຳເປັນເພື່ອບັນລຸຈຸດປະສົງໃນການຄຸ້ມຄອງຊີວິດຄົນລາວທຸກຄົນ ທຸກຄົນຕ້ອງເຂົ້າໃຈ ແລະ ໃຫ້ຄວາມຮ່ວມມືຕາມມາດຕະການດັ່ງກ່າວ. ເຖິງແມ່ນວ່າມາດຕະການນີ້ຈະສົ່ງຜົນກະທົບຕໍ່ສິດເສລີພາບໃນຫຼາຍໆດ້ານຂອງປະຊົນຢ່າງຫຼີກລຽງບໍ່ໄດ້ ແຕ່ຄວາມໄວ້ວາງໃຈເຫລົ່ານີ້ສົ່ງຜົນໃຫ້ຄົນລາວທຸກຄົນມີຄວາມປອດໄພຈາກບັນຫານີ້.

ແຂວງຫຼວງພະບາງ ພາຍຫຼັງທີ່ມີການລະບາດຂອງພະຍາດໂຄວິດ-19 ທ້າຍປີ 2019 ເປັນຕົ້ນມາ, ແຂວງຫຼວງພະບາງ ໄດ້ຊີ້ນຳຢ່າງໃກ້ຊິດ ວຽກງານສະກັດກັ້ນ ແລະ ກັນການລະບາດຂອງພະຍາດໃດພິດ ແນ່ໃສ່ປ້ອງກັນຊີວິດ ແລະ ຊັບສິນຂອງປະຊາຊົນບັນດາເຜົ່າ ລວມທັງຊາວຕ່າງດ້າວ, ຄົນຕ່າງປະເທດ ທີ່ດຳລົງຊີວິດຢູ່ໃນ ແຂວງຫຼວງພະບາງ ໂດຍໄດ້

ແຕ່ງຕັ້ງ ຄະນະສະເພາະກິດເພື່ອຕິດຕາມ, ປະເມີນ, ຄົ້ນຄວ້າ ແລະ ອອກມາດຕະການຈຳນວນໜຶ່ງ ເຊິ່ງຜ່ານມາ ກໍ່ຈັດຕັ້ງປະຕິບັດໂດຍໄດ້ຮັບການຮ່ວມມືເປັນຢ່າງດີ ຈາກພາກສ່ວນຕ່າງໆໃນສັງຄົມກໍ່ຄືບັນດາ ແຂວງໃກ້ຄຽງ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ເຮັດໃຫ້ມາເຖິງປັດຈຸບັນ ຍັງສາມາດສະກັດກັ້ນ ແລະ ປ້ອງກັນການລະບາດຂອງພະຍາດດັ່ງກ່າວໄດ້ໃນລະດັບດີ. ເຖິງຢ່າງໃດກໍ່ຕາມ, ການລະບາດຂອງພະຍາດ ໂຄວິດ-19 ຢູ່ໃນແຂວງ ແລະ ເມືອງ ຍັງສືບຕໍ່ຂະຫຍາຍກວ້າງອອກ, ມີຜູ້ຕິດເຊື້ອ ແລະ ຜູ້ເສຍຊີວິດເພີ່ມຂຶ້ນຢ່າງໜ້າວິຕົກ. ກະຊວງສາທາລະນະສຸກ, ຄະນະສະເພາະກິດຂັ້ນກະຊວງໄດ້ປະກາດໃຫ້ການລະບາດຂອງພະຍາດ (Covid-19) ເປັນການລະບາດໃຫຍ່ (Pandemic) ແລະ ຮຽກຮ້ອງໃຫ້ບັນດາແຂວງທີ່ມີການລະບາດ ຍົກລະດັບມາດຕະການເຝົ້າລະວັງ ແລະ ຮັບມືກັບການລະບາດ. ຍ້ອນແຂວງຫຼວງພະບາງກໍ່ເປັນແຂວງໜຶ່ງທີ່ມີຜູ້ຕິດເຊື້ອໃນຮອບທີ 1 ແມ່ນ 3 ຄົນ, ພະນັກງານຂັບລົດທ່ອງທ່ຽວ 2 ຄົນ ແລະ ພັນລະຍາຜູ້ຂັບລົດ 1 ຄົນລວມເປັນ 3 ຄົນ. ເລີ່ມຮອບທີສອງໃນຕົ້ນເດືອນ ເມສາ ຈົນເຖິງ 31 ພຶດສະພາ 2021 ແຂວງຫຼວງພະບາງ ມີຜູ້ຕິດເຊື້ອສະສົມຈຳນວນ 16 ຄົນ , ຈົນມາເຖິງປະຈຸບັນແມ່ນປິ່ນປົວຫາຍດີທັງໝົດແລ້ວ ແລະ ບໍ່ມີການສະແດງຕົວເລກຜູ້ຕິດເຊື້ອກໍຕາມ ແຕ່ການແຜ່ລະບາດຂອງເຊື້ອດັ່ງກ່າວໄດ້ມີຜົນກະທົບຕໍ່ແຂວງຫຼວງພະບາງໃນຫຼາຍດ້ານ. ເນື່ອງຈາກຫຼວງພະບາງເປັນແຂວງໜຶ່ງທີ່ມີທ່າແຮງທາງດ້ານການທ່ອງທ່ຽວເຮັດໃຫ້ມີນັກທ່ອງທ່ຽວເຂົ້າມາຈຳນວນຫຼວງຫຼາຍຈາກຕົວເລກສະຖິຕິປີ 2018 ມີນັກທ່ອງທ່ຽວທີ່ເຂົ້າມາແຂວງຫຼວງພະບາງຈຳນວນນັກທ່ອງທ່ຽວຕ່າງປະເທດທັງໝົດ 576,610 ຄົນ, ນັກທ່ອງທ່ຽວພາຍໃນ 178,409 ຄົນ ແລະ ມີລາຍໄດ້ຈາກການທ່ອງທ່ຽວທັງໝົດແມ່ນ 237,746,350 ໂດລາ. ພາຍຫຼັງໂລກລະບາດ ລັດຖະບານ ໄດ້ວາງມາດຕະການປ້ອງກັນພະຍາດ ຈຶ່ງມີການປິດບັນດາໂຮງຮຽນ, ໂຮງແຮມ, ຮ້ານອາຫານ, ຮ້ານອາຫານ, ສະຖານບັນເທີງ, ທຸລະກິດບໍລິການອື່ນໆອ້ອມຂ້າງ ເຮັດໃຫ້ນັກທ່ອງທ່ຽວໄດ້ຍົກເລີກການຈອງຫ້ອງພັກ, ບໍລິສັດທ່ອງທ່ຽວ ແລະ ແຜນທ່ອງທ່ຽວໃນຫຼວງພະບາງ ເຮັດໃຫ້ບັນດາທຸລະກິດເຫຼົ່ານີ້ໄດ້ຮັບຜົນກະທົບໂດຍກົງ. ດັ່ງນັ້ນ, ທາງທີມງານນັກຄົ້ນຄ້ວາຈຶ່ງມີຄວາມສົນໃຈທີ່ຢາກຈະສຶກສາເພື່ອສຶກສາຜົນກະທົບຂອງໂລກລະ ບາດພະຍາດອັກເສບປອດໄວລັດໂຄໂລນາ (Covid-19) ຕໍ່ກັບທຸລະກິດບໍລິການໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ. ດັ່ງນັ້ນທີມງານຄະນະຜູ້ວິໄຈຈຶ່ງສົນໃຈ ແລະ ໄດ້ກຳນົດຈຸດປະສົງຂອງການຄົ້ນຄວ້າ 3 ຈຸດປະສົງໄດ້ແກ່: 1) ຜົນກະທົບຂອງໂລກລະບາດພະຍາດອັກເສບປອດສາຍພັນໃໝ່ໄວລັດໂຄໂລນາ (Covid-19) ຕໍ່ກັບທຸລະກິດບໍລິການ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ, 2) ຄວາມຄິດເຫັນຂອງຜູ້ປະກອບທຸລະກິດບໍລິການຕໍ່ການປະຕິບັດນະໂຍບາຍຂອງລັດຖະບານ ພາຍຫຼັງເກີດໂລກລະບາດພະຍາດອັກເສບປອດສາຍພັນໃໝ່ໄວລັດໂຄໂລນາ (Covid-19) ແລະ 3) ສະເໜີແນວທາງໃນການປັບຕົວຂອງທຸລະກິດບໍລິການ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

### 2.1 ວິທີການຄົ້ນຄ້ວາ

ໃນການຄົ້ນຄວ້າວິໄຈຄັ້ງນີ້ແມ່ນນຳໃຊ້ການສຶກສາຄົ້ນ ຄວ້າແບບປະລິມານ ແລະ ຄຸນນະພາບ ໂດຍໃຊ້ແບບສອບຖາມປະກອບໃນການເກັບກຳຂໍ້ມູນຜົນກະທົບຂອງໂລກລະບາດພະຍາດອັກເສບປອດສາຍພັນໃໝ່ໄວລັດໂຄໂລນາ (Covid-19) ຕໍ່ກັບທຸລະກິດບໍລິການ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ແລະ ຂໍ້ມູນຄວາມຄິດເຫັນຂອງຜູ້ປະກອບທຸລະກິດບໍລິການຕໍ່ການປະຕິບັດນະໂຍບາຍຂອງລັດຖະບານ ພາຍຫຼັງເກີດໂລກລະບາດພະຍາດອັກເສບປອດສາຍພັນໃໝ່ໄວລັດໂຄໂລນາ (Covid-19) ແລ້ວນຳມາວິ ເຄາະ, ຈັດລຽງຂໍ້ມູນທີ່ໄດ້ມາຕາມລຳດັບ ເພື່ອຊອກຫາຄ່າຄວາມຖີ່ (Frequency), ຄ່າສ່ວນຮ້ອຍ (Percentage), ຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖາ (Standard Deviation) ໂດຍນຳໃຊ້ໂປຼແກມສຳເລັດຮູບໃນການວິ ເຄາະຂໍ້ມູນທາງສັງຄົມສາດ. ສ່ວນການການສຶກສາຄົ້ນຄວ້າແບບຄຸນນະພາບໂດຍໃຊ້ແບບສອບຖາມປະກອບໃນການເກັບກຳຂໍ້ມູນແນວທາງໃນການປັບຕົວຂອງທຸລະກິດບໍລິ ການ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ແລ້ວນຳມາວິເຄາະທາງດ້ານເນື້ອໃນ, ຈັດລຽງຂໍ້ມູນ, ຕີຄວາມໝາຍ, ສະຫລຸບຂໍ້ມູນທີ່ໄດ້ມາຕາມລຳດັບ. ປະຊາກອນທີ່ໃຊ້ເຂົ້າໃນການຄົ້ນຄວ້າວິໄຈຄັ້ງນີ້ແມ່ນຜູ້ປະກອບການທຸລະກິດບໍລິການ. ສ່ວນການສຸ່ມກຸ່ມຕົວຢ່າງໃນການຄົ້ນຄວ້າຄັ້ງນີ້ແມ່ນເລືອກໃຊ້ວິທີການສຸ່ມຕົວຢ່າງແບບອາໄສຫລັກຄວາມຫນ້າຈະເປັນຕາມໂອກາດທາງສະຖິຕິ ໂດຍໃຊ້ເທັກນິກການສຸ່ມແບບງ່າຍ ດ້ວຍວິທີການຈົກສະຫຼາກ ສ່ວນການກຳນົດຂະໜາດ ຫຼື ຈຳນວນກຸ່ມຕົວຢ່າງ ແມ່ນໃຊ້ວິທີການກຳນົດຈຳນວນຕົວຢ່າງ ໂດຍໃຊ້ສູດການຄຳນວນ ແລະ ຕາມຫຼັກການຂອງ ທ່ານ ທາໂລຢາມາເນ (Taro Yamane, 1973:125) ໃນກໍລະນີທີ່ຮູ້ຈຳນວນ

ປະຊາກອນແນ່ນອນ ເຊິ່ງຄຳນວນໄດ້ກຸ່ມຕົວຢ່າງຈຳນວນ 283 ຄົນ.

**2.2 ເຄື່ອງມືການຄົ້ນຄ້ວາ**

ເຄື່ອງມືທີ່ໃຊ້ໃນການສຶກສາຄົ້ນຄວ້າການຄົ້ນຄວ້າວິໄຈຄັ້ງນີ້ໃຊ້ແບບສອບຖາມ ແລະ ແບບສຳພາດໃນການເກັບລວບລວມຂໍ້ມູນ. ພາຍຫຼັງທີ່ໄດ້ຂໍ້ມູນມາຈາກແບບສອບຖາມ ແລະ ແບບສຳພາດມາແລ້ວທີມງານຜູ້ຄົ້ນຄວ້າໄດ້ນຳເອົາບັນດາຂໍ້ມູນດັ່ງກ່າວມາດຳເນີນການວິເຄາະຕາມຈຸດປະສົງເຊິ່ງທີມງານຜູ້ຄົ້ນຄວ້າໄດ້ວິເຄາະຂໍ້ມູນປະລິມານດ້ວຍໂປຼແກຣມ SPSS.

**2.3 ການວິເຄາະຂໍ້ມູນ ແລະ ແປຜົນ**

1. ການວິເຄາະກ່ຽວກັບປັດໄຈສ່ວນບຸກຄົນຂອງຜູ້ປະກອບການທຸລະກິດບໍລິການທີ່ໄດ້ຮັບຜົນກະທົບຂອງການແຜ່ລະບາດພະຍາດໂຄວິດ 19 ທີມງານຜູ້ຄົ້ນຄວ້າໄດ້ວິເຄາະໂດຍໃຊ້ສະຖິຕິພັນລະນາຄື: ຄ່າຄວາມຖີ່ (Frequency) ແລະ ຄ່າສ່ວນຮ້ອຍ (Percentage) ໄດ້ແກ່ຂໍ້ມູນເພດ, ອາຍຸ, ລະດັບການສຶກສາ, ຮູບແບບການປະກອບທຸລະກິດ, ຂະໜາດຂອງທຸລະກິດ, ແຫຼ່ງທຶນໃນການປະກອບທຸລະກິດ, ປະເພດທຸລະກິດ, ໄລຍະເວລາໃນການດຳເນີນທຸລະກິດ, ລາຍໄດ້ຕໍ່ເດືອນກ່ອນການແຜ່ລະບາດພະຍາດໂຄວິດ 19, ລາຍໄດ້ຕໍ່ເດືອນຫຼັງມີການແຜ່ລະບາດພະຍາດໂຄວິດ 19.

2. ການວິເຄາະກ່ຽວກັບຜົນກະທົບດ້ານເສດຖະກິດ, ຜົນກະທົບດ້ານສັງຄົມ ແລະ ຄວາມຄິດເຫັນຂອງຜູ້ປະກອບການຕໍ່ນະໂຍບາຍ ຂອງລັດຖະບານ ດ້ານການປະຕິບັດນະໂຍບາຍ ແລະ ການປະຕິບັດການຄວບຄຸມ ເຊິ່ງທີມງານຜູ້ຄົ້ນຄວ້າໄດ້ວິເຄາະຂໍ້ມູນໂດຍໃຊ້ສະຖິຕິພັນລະນາ (Descriptive Statistics) ຄື: ຄ່າຄວາມຖີ່ (Frequency), ຄ່າສ່ວນຮ້ອຍ (Percentage), ຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Standard Deviation) ໂດຍນຳສະເໜີແບບຕາຕະລາງ.

3. ສ່ວນການສະເໜີແນວທາງການປັບຕົວຂອງທຸລະກິດບໍລິການໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ທີມງານຜູ້ຄົ້ນຄວ້າໄດ້ວິເຄາະຂໍ້ມູນຄຸນນະພາບໂດຍການການວິເຄາະທາງດ້ານເນື້ອໃນ, ຈັດລຽງຂໍ້ມູນ, ຕີຄວາມໝາຍ, ສະຫລຸບຂໍ້ມູນທີ່ໄດ້ມາຕາມລຳດັບ.

**3. ຜົນໄດ້ຮັບ**

**3.1 ຜົນກະທົບຂອງໂລກລະບາດພະຍາດອັກເສບປອດສາຍພັນໃໝ່ໄວລັດໂຄໂລນາ (Covid-19) ຕໍ່ກັບທຸລະກິດບໍລິການໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ.**

ຜົນການຄົ້ນຄວ້າວິໄຈພົບວ່າ ຜູ້ປະກອບການທຸລະກິດບໍລິການທີ່ໄດ້ຮັບຜົນກະທົບຂອງການແຜ່ລະບາດພະຍາດໂຄວິດ 19 ສ່ວນຫຼາຍແມ່ນເປັນເພດຊາຍຈຳນວນ 152 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 53.71%, ມີອາຍຸລະຫວ່າງ 30-40 ປີ, ມີຈຳນວນ 107 ຄົນ, ມີລະດັບການສຶກສາປະລິນຍາຕີ ມີຈຳນວນ 126 ຄົນ, ສ່ວນໃຫຍ່ຮູບແບບການປະກອບທຸລະກິດຂອງຜູ້ໃຫ້ຂໍ້ມູນແມ່ນທຸລະກິດສ່ວນບຸກຄົນ ມີຈຳນວນ 232 ຄົນ, ຂະໜາດທຸລະກິດຂອງຜູ້ໃຫ້ຂໍ້ມູນສ່ວນໃຫຍ່ແມ່ນທຸລະກິດຂະໜາດນ້ອຍ ມີຈຳນວນ 173 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 61.13%, ແຫຼ່ງເງິນທຶນຫຼັກໃນການປະກອບທຸລະກິດຂອງຜູ້ໃຫ້ຂໍ້ມູນສ່ວນໃຫຍ່ແມ່ນເງິນທຶນສ່ວນຕົວ ມີຈຳນວນ 220 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 79.42%, ປະເພດທຸລະກິດການບໍລິການຂອງຜູ້ໃຫ້ຂໍ້ມູນສ່ວນໃຫຍ່ແມ່ນທຸລະກິດທີ່ພັກເຊົາ ມີຈຳນວນ 132 ຄົນ, ໄລຍະເວລາໃນການດຳເນີນທຸລະກິດຂອງຜູ້ໃຫ້ຂໍ້ມູນສ່ວນໃຫຍ່ແມ່ນ 5-10 ປີ ມີຈຳນວນ 122 ຄົນ, ລາຍໄດ້ສະເລ່ຍໃນການປະກອບທຸລະກິດຕໍ່ເດືອນ (ກ່ອນການລະບາດຂອງພະຍາດ Covid-19) ແມ່ນ 10.000.000 - 50.000.000 ກີບ ມີຈຳນວນ 133 ຄົນ, ແລະ ລາຍໄດ້ສະເລ່ຍໃນການປະກອບທຸລະກິດຕໍ່ເດືອນ (ພາຍຫລັງການລະບາດຂອງພະຍາດ Covid-19) ແມ່ນ ຕໍ່າກວ່າ 10.000.000 ກີບ ມີຈຳນວນ 227 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 80.21%. ຜົນການສຶກສາກ່ຽວກັບຜົນກະທົບຂອງໂລກພະຍາດອັກເສບປອດສາຍພັນໃໝ່ ໄວລັດໂຄໂລນາ (Covid-19) ຕໍ່ກັບທຸລະກິດບໍລິການໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ປະກອບມີ ຜົນກະທົບທາງດ້ານເສດຖະກິດ (ດ້ານລົບ) ໂດຍລວມແລ້ວຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍລວມເທົ່າກັບ 4.18 ເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ: ການລະບາດຂອງໂລກພະຍາດອັກເສບປອດສາຍພັນໃໝ່ (Covid-19) ເຮັດໃຫ້ລາຍໄດ້ຂອງທຸລະກິດຫຼຸດລົງ ແມ່ນຢູ່ໃນລະດັບຫຼາຍທີ່ສຸດ ມີຄ່າສະເລ່ຍເທົ່າກັບ 4.41, ຮອງລົງມາແມ່ນອັດຕາການຫວ່າງງານເພີ່ມຂຶ້ນ, ເຮັດໃຫ້ອັດຕາເງິນເຟີ້ສູງຂຶ້ນ, ບໍ່ສາມາດດຳເນີນທຸລະກິດຕາມປົກກະຕິໄດ້, ເຮັດໃຫ້ລາຄາສິນຄ້າທີ່ຈຳເປັນຕໍ່ທຸລະກິດສູງຂຶ້ນ, ເຮັດໃຫ້ການອອມເງິນຂອງທຸລະກິດຫຼຸດລົງຕາມລຳດັບ; ຜົນກະທົບທາງດ້ານເສດຖະກິດ (ດ້ານບວກ) ໂດຍລວມແລ້ວຢູ່ໃນລະດັບປານກາງ

ມີຄ່າສະເລ່ຍລວມເທົ່າກັບ 3.15 ເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ: ການລະບາດຂອງໂລກພະຍາດອັກເສບປອດສາຍພັນໃໝ່ (Covid-19) ເຮັດໃຫ້ມີເວລາໄປສ້າງເສດຖະກິດຄອບຄົວໂດຍສະເພາະດ້ານການກະສິກຳຫຼາຍຂຶ້ນ, ຮອງລົງມາແມ່ນເຮັດໃຫ້ຄ່າໃຊ້ຈ່າຍໃນກິດຈະກຳທາງສັງຄົມຂອງທຸລະກິດຫຼຸດລົງ ແລະ ເຮັດໃຫ້ຄ່າໃຊ້ຈ່າຍໃນການຈ້າງງານຂອງທຸລະກິດຫຼຸດລົງ; ຜົນກະທົບທາງດ້ານສັງຄົມ (ດ້ານລົບ) ໂດຍລວມແລ້ວຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍລວມເທົ່າກັບ 4.18 ເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ: ການລະບາດຂອງໂລກພະຍາດອັກເສບປອດສາຍພັນໃໝ່ (Covid-19) ເຮັດໃຫ້ການເດີນທາງໄປສະຖານທີ່ຕ່າງໆຕ້ອງໄດ້ມີຄວາມລະມັດລະວັງຫຼາຍຂຶ້ນ ແມ່ນຢູ່ໃນລະດັບຫຼາຍທີ່ສຸດ ມີຄ່າສະເລ່ຍເທົ່າກັບ 4.51, ເກີດບັນຫາທາງສັງຄົມຫຼາຍຂຶ້ນ, ການບໍລິໂພກອາຫານຕ້ອງໄດ້ມີຄວາມລະມັດລະວັງຫຼາຍຂຶ້ນ, ການດຳລົງຊີວິປະຈຳວັນປ່ຽນແປງ ແມ່ນຢູ່ໃນລະດັບຫຼາຍທີ່ສຸດ; ຜົນກະທົບທາງດ້ານສັງຄົມ (ດ້ານບວກ) ໂດຍລວມແລ້ວຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍລວມເທົ່າກັບ 4.02 ເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ: ເຮັດໃຫ້ມີເວລາໄດ້ຢູ່ກັບຄອບຄົວຫຼາຍຂຶ້ນ, ຮອງລົງມາແມ່ນເຮັດໃຫ້ຕົວເອງ, ຄອບຄົວ ແລະ ບຸກຄະລາກອນໃນອົງກອນ ມີເວລາໄດ້ດູແລຮັກສາສຸຂະພາບຫຼາຍຂຶ້ນ.

### 3.2 ຄວາມຄິດເຫັນຂອງຜູ້ປະກອບການຕໍ່ນະໂຍບາຍ ແລະ ມາດຕະການຄວບຄຸມການລະບາດຂອງໂລກລະບາດພະຍາດອັກເສບປອດສາຍພັນໃໝ່ໄວລັດໂຄໂລນາ (Covid-19) ຂອງລັດຖະບານ.

ຜົນການຄົ້ນຄວ້າວິໄຈພົບວ່າ: ທຸລະກິດບໍລິການໃນນະຄອນຫຼວງພະບາງມີຄວາມຄິດເຫັນຕໍ່ການປະຕິບັດນະໂຍບາຍຂອງລັດຖະບານເພື່ອຫຼຸດຜ່ອນຜົນກະທົບຂອງການລະບາດໂລກພະຍາດອັກເສບປອດສາຍພັນໃໝ່ (Covid-19) ໂດຍລວມແລ້ວແມ່ນຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍລວມ 3.51. ເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ: ທຸລະກິດບໍລິການໃນນະຄອນຫຼວງພະບາງມີຄວາມຄິດເຫັນຕໍ່ການປະຕິບັດນະໂຍບາຍຍົກເວັ້ນການເກັບອາກອນລາຍໄດ້ຈາກເງິນເດືອນຂອງຜູ້ອອກແຮງງານທັງໝົດທັງພາກລັດ ແລະ ເອກະຊົນ ທີ່ມີລາຍຮັບ 5 ລ້ານກີບລົງມາຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນການປະຕິບັດນະໂຍບາຍໃຫ້ຕໍ່ເວລາການສົ່ງເອກະສານລາຍງານການເງິນ ແລະ ຜົນການເຄື່ອນໄຫວວຽກງານປະຈຳປີ 2019 ຂອງວິສາຫະກິດ ຈາກ 31 ມີນາ 2020 ໄປເປັນ 30 ເມສາ ຢູ່ໃນລະດັບຫຼາຍ, ການປະຕິບັດນະໂຍບາຍໃຫ້ຄົ້ນຄວ້າຜ່ອນຜັນລາຄາ ແລະ ຕໍ່ເວລາ ໃນການຊຳລະຄ່າໄຟຟ້າ ແລະ ນ້ຳປະປາຂອງຜູ້ຊົມໃຊ້ຄົວເຮືອນ ແລະ ພາກທຸລະກິດ ຢູ່ໃນລະດັບຫຼາຍ, ການປະຕິບັດນະໂຍບາຍໃຫ້ເລື່ອນການຊຳລະພັນທະອາກອນຂອງຜູ້ປະກອບການທຸລະກິດບໍລິການທ່ອງທ່ຽວ ເປັນໄລຍະເວລາ 3 ເດືອນ ເລີ່ມແຕ່ເດືອນ ເມສາ 2020 ເປັນຕົ້ນໄປ ຢູ່ໃນລະດັບຫຼາຍ ຕາມລຳດັບ;

ຜົນການຄົ້ນຄວ້າວິໄຈພົບວ່າ: ທຸລະກິດບໍລິການໃນນະຄອນຫຼວງພະບາງມີຄວາມຄິດເຫັນຕໍ່ການປະຕິບັດມາດຕະການຄວບຄຸມການລະບາດໂລກພະຍາດອັກເສບປອດສາຍພັນໃໝ່ (Covid-19) ຂອງລັດຖະບານ ໂດຍລວມແລ້ວແມ່ນຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍລວມ 3.90. ເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ: ທຸລະກິດບໍລິການໃນນະຄອນຫຼວງພະບາງມີຄວາມຄິດເຫັນຕໍ່ມາດຕະການຫ້າມບຸກຄົນເດີນທາງໄປທ້ອງຖິ່ນອື່ນ ຫຼື ເຂດທີ່ມີການຕິດເຊື້ອ ຫຼື ເຂດທີ່ມີຄວາມສ່ຽງ ຍົກເວັ້ນຜູ້ທີ່ໄດ້ຮັບອະນຸຍາດຈາກອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຍ້ອນເຫດຜົນຈຳເປັນເຊັ່ນ: ຂົນສົ່ງສິນຄ້າ,ໄປໂຮງໝໍ ຢູ່ໃນລະດັບຫຼາຍທີ່ສຸດ, ຮອງລົງມາແມ່ນມາດຕະການປິດດ່ານປະເພນີ ແລະ ດ່ານທ້ອງຖິ່ນ ຢ່າງເຂັ້ມງວດເດັດຂາດ ແລະ ໃຫ້ປິດດ່ານສາກົນທັງໝົດ, ມາດຕະການປິດກິດຈະການຮ້ານບັນເທີງ, ຮ້ານຄາຣາໂອເກະ, ຮ້ານເບຍ,ຮ້ານບໍລິການນວດ ແລະ ສະປາທຸກປະເພດ; ຢູ່ໃນລະດັບຫຼາຍທີ່ສຸດ, ມາດຕະການອະນຸຍາດໃຫ້ສືບຕໍ່ດຳເນີນກິດຈະການທີ່ມີຄວາມຈຳເປັນ ເປັນຕົ້ນແມ່ນທະນາຄານ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ,ໂຮງໝໍ, ສູນການແພດ; ສະຖານທີ່ ທີ່ອະນຸຍາດໃຫ້ເປີດນັ້ນຕ້ອງປະຕິບັດຕາມມາດຕະການປ້ອງກັນທີ່ຄະນະສະເພາະກິດວາງອອກຢ່າງເຂັ້ມງວດ ຢູ່ໃນລະດັບຫຼາຍ, ມາດຕະການຫ້າມກັກຕຸນ ແລະ ຂຶ້ນລາຄາສິນຄ້າ ທີ່ຈຳເປັນຕໍ່ການກັນການລະບາດ, ການອຸປະໂພກ ແລະ ບໍລິໂພກ; ຕາມລຳດັບ.

### 3.3 ແນວທາງໃນທາງໃນການປັບຕົວຕໍ່ຜົນກະທົບຂອງທຸລະກິດບໍລິການໃນນະຄອນຫຼວງພະບາງ.

- ການຄວບຄຸມລາຄາສິນຄ້າບາງຊະນິດທີ່ຈຳເປັນຕໍ່ທຸລະກິດ ແລະ ປະຊາຊົນ, ບາງສິນຄ້າທີ່ຕ້ອງການປັບລາຄາຂຶ້ນທີ່ບໍ່ເໝາະສົມໂດຍສະເພາະເຄື່ອງອຸປະໂພກລັດຕ້ອງຊ່ວຍໃນການກຳນົດລາຄາ ເພື່ອຫລີກຫລ່ຽງການຂຶ້ນລາຄາຕາມລຳພັງໃຈຂອງຜູ້ປະກອບການນຳເຂົ້າ.

- ການມີສ່ວນຮ່ວມຂອງພາກສ່ວນທະນາຄານຄວນມີນະໂຍບາຍຍືດອາຍຸການສຳລະອັດຕາດອກເບ້ຍກູ້ຢືມໃຫ້ບັນດາຫົວໜ່ວຍທຸລະກິດທີ່ໄດ້ຮັບຜົນກະທົບຈາກໂຄວິດ-19 ໂດຍສະເພາະບັນດາທຸລະກິດທີ່ປິດການໃຫ້ບໍລິການຕາມຄວາມເໝາະສົມ.

- ຄວນມີການຍົກເວັ້ນກຸ່ມລູກຄ້າບາງປະເທດທີ່ບໍ່ມີການລະບາດຂອງເຊື້ອພະຍາດ ຫຼື ລະບາດນ້ອຍໃຫ້ສາມາດເຂົ້າໃຊ້ບໍລິການໄດ້ ແຕ່ຕ້ອງມີສະຖານທີ່ກັກຕົວໃຫ້ຄົບຕາມຈຳນວນວັນທີ່ຮອງຮັບການແຜ່ເຊື້ອ ແລະ ມີການກວດເຊື້ອ RTK ທີ່ສາມາດຮອງຮັບໄດ້ສະດວກ ແລະ ວ່ອງໄວ ກ່ອນຈຶ່ງປ່ອຍໃຫ້ມີການມາໃຊ້ບໍລິການ ແລະ ຄວນມີການເຂັ້ມງວດເລື່ອງການກວດຄົ້ນ ແລະ ສະກັດກັ້ນຄົນທີ່ລັກລອບເຂົ້າມາແບບບໍ່ຖືກຕ້ອງ ແລະ ສ່ຽງຕໍ່ການຕິດເຊື້ອ, ການໃຫ້ລູກຄ້າທັງພາຍໃນ ແລະ ຕ່າງປະເທດສາມາດເຂົ້າມາໃຊ້ບໍລິການຈະສາມາດສ້າງເງິນໝູນວຽນໃນທຸລະກິດບໍລິການ ຂອງນະຄອນຫຼວງພະບາງ

- ທຸລະກິດຄວນປັບຕົວ ແລະ ຮ່ວມມືກັນໃນການຫາລູກຄ້າກຸ່ມໃໝ່ເພື່ອສ້າງລາຍໄດ້ໃຫ້ກັບທຸລະກິດ, ຫຼຸດຄ່າໃຊ້ຈ່າຍທີ່ບໍ່ຈຳເປັນລົງປັບໂຄງສ້າງບຸກຄະລາກອນຕາມຄວາມເໝາະສົມກັບສະພາບປະຈຸບັນ, ສ້າງຊ່ອງການຂາຍໃນຮູບແບບໃໝ່, ຊ່ອງທາງການສຳລະເງິນທີ່ສະດວກ (ຄືວອາໂຄ້ດ QR code)

- ການສົ່ງເສີມນັກທ່ອງທ່ຽວຄວນຍົກເວັ້ນຄ່າວີຊ່າຂອງນັກທ່ອງທ່ຽວໃນປີທຳອິດ. ແຕ່ຕ້ອງປະກອບແບບຟອມປະຕິບັດມາດຕະການຄວບຄຸມຂອງລາວເຮົາຢ່າງເຄັ່ງຄັດ (ຖ້າລະເມີດປັບໃໝ-ສົ່ງກັບ). ສ່ວນປີທີ 2 ເກັບຄ່າວີຊ່າ 50% ຫລັງຈາກປີທີ 3 ເກັບ 100%.

- ທາງພາກລັດໃຫ້ໃຊ້ວິກິດໃຫ້ເປັນໂອກາດເຊັ່ນ: ສະໜອງທຶນດອກເບ້ຍຕໍ່າໃຫ້ແກ່ທຸລະກິດພາຍໃນຂະແໜງການທ່ອງທ່ຽວຄື: ທຸລະກິດທ່ອງທ່ຽວ,ໂຮງແຮມ-ເຮືອນພັກ ໃຫ້ມີຄວາມພ້ອມໃນການບໍລິການຮັບແຂກທີ່ຈະເຂົ້າມາຫຼັງຈາກເປີດທາງລົດໄຟ

- ໜ່ວຍງານທີ່ກ່ຽວຂ້ອງຄວນລົງໃຫ້ຄວາມຮູ້ທີ່ຊັດເຈນກ່ຽວກັບຄວາມຮຸນແຮງ ແລະ ການແຜ່ລະບາດຂອງພະຍາດໂຄວິດ-19 ພ້ອມທັງວິທີການປ້ອງກັນທີ່ຖືກຕ້ອງ, ການໃຫ້ວັກຊີນທີ່ທົ່ວເຖິງ ແລະ ການຕິດຕໍ່ປະສານງານໃນກໍລະນີຕ້ອງການຄວາມຊ່ວຍເຫຼືອໃຫ້ທວງທັນເວລາ, ຄວນແບ່ງໜ້າທີ່ຄວາມນັບຜິດຊອບຕາມລຳດັບຂັ້ນເພື່ອໃຫ້ງ່າຍ ແລະ ເຂົ້າເຖິງໄດ້.

- ພະແນກແຮງງານ ແລະ ສະຫວັດດີການສັງຄົມຕ້ອງໃຫ້ການຊ່ວຍເຫຼືອແກ່ປະຊາຊົນທີ່ຫວ່າງງານຈາກຜົນກະທົບຂອງພະຍາດໂຄວິດ-19 ຫຼື ປະຊາຊົນຜູ້ທີ່ຕິດເຊື້ອທີ່ໄດ້ປະກັນຕົນ ຫຼື ຈ່າຍສະຫວັດດີການສັງຄົມເພື່ອຫຼຸດຜ່ອນຄວາມກົດດັນໃນການດຳລົງຊີວິດ.

- ບັນດາຫົວໜ່ວຍທຸລະກິດຄວນປັບໂຄງສ້າງການບໍລິຫານງານດ້ານບຸກຄະລາກອນໃຫ້ມີການພັດປ່ຽນກັນເຂົ້າວຽກເພື່ອປ້ອງກັນການແອອັດ ແລະ ປ່ຽນກົດລະຍຸດດ້ານການຕະຫຼາດໃຫ້ເຂົ້າກັບກຸ່ມລູກຄ້າພາຍໃນປະເທດເຊັ່ນ: ລາຄາ, ການຫຼຸດ, ແລກ, ແຈກ, ແຖມ ເປັນຕົ້ນ.

- ບັນດາຫົວໜ່ວຍທຸລະກິດຄວນໃຊ້ວິທີການດຳລົງຊີວິດໃນຮູບແບບໃໝ່ເຊັ່ນ: ການປ້ອງກັນຕົນເອງ, ວິທີການສ້າງສາຍສຳພັນກັບກຸ່ມລູກຄ້າ ແລະ ບັນດາຫົວໜ່ວຍທຸລະກິດອື່ນ, ແຈ້ງໂຈະບາງກິດຈະກຳທາງປະເພນີມີການເຂົ້າຮ່ວມຂອງກຸ່ມຄົນຈຳນວນຫຼາຍ.

## 4. ວິພາກຜົນ

ຜົນຈາກການຄົ້ນຄວ້າເຫັນໄດ້ວ່າຜົນກະທົບຂອງພະຍາດໂຄວິດ-19 ຕໍ່ທຸລະກິດບໍລິການ ຂອງນະຄອນຫຼວງພະບາງ ຕໍ່ດ້ານເສດຖະກິດແມ່ນ ຖືວ່າໜ້ອຍກ່ວາດ້ານສັງ ຄົມ ໂດຍສະເພາະຜົນກະທົບດ້ານລົບເຊັ່ນ: ການເດີນທາງໄປສະຖານທີ່ຕ່າງໆຕ້ອງໄດ້ມີຄວາມລະມັດລະວັງຫຼາຍຂຶ້ນ, ການບໍລິໂພກອາຫານຕ້ອງໄດ້ມີຄວາມລະມັດລະວັງຫຼາຍຂຶ້ນ, ການດຳລົງຊີວິປະຈຳວັນປ່ຽນແປງ ເຊິ່ງສອດຄ້ອງກັບ Asma Srimarak (2008) ແລະ Keansin Nousoudthi (1996), ຜົນກະທົບມີຜົນຕໍ່ການປ່ຽນແປງທາງດ້ານສັງຄົມທາງດ້ານບວກ ແລະ ດ້ານລົບ. ສຳລັບຜົນກະທົບດ້ານບວກແມ່ນດ້ານສັງຄົມຈະຫຼາຍກ່ວາດ້ານເສດຖະກິດໂດຍສະເພາະແມ່ນ ເຮັດ

ໃຫ້ມີເວລາໄດ້ຢູ່ກັບຄອບຄົວຫຼາຍຂຶ້ນ, ເຮັດໃຫ້ຕົວເອງ, ຄອບຄົວ ແລະ ບຸກຄະລາກອນໃນອົງກອນ ມີເວລາໄດ້ດູແລຮັກສາສຸຂະພາບຫຼາຍຂຶ້ນ.ສອດຄ້ອງກັບ Boonlert Chittangwattana (2005) ແລະ Manas (1996) ໄດ້ກ່າວໄວ້ວ່າການທ່ອງ ທ່ຽວມີຜົນກະທົບທີ່ມີ ຜົນປະໂຫຍດຕໍ່ທາງດ້ານເສດຖະກິດ ແລະ ສັງຄົມຂອງປະຊາຊົນທ້ອງຖິ່ນ ແລະ ປະເທດຊາດ.

ຜົນການຄົ້ນຄວ້າກ່ຽວກັບຄວາມຄິດເຫັນຂອງຜູ້ປະກອບການຕໍ່ນະໂຍບາຍ ແລະ ມາດຕະການຄວບຄຸມການລະບາດຂອງໂລກລະບາດພະຍາດອັກເສບປອດສາຍພັນໃໝ່ໄວລັດໂຄໂລນາ (Covid-19) ຂອງລັດຖະບານ ພົບວ່າ: ໂດຍລວມແລ້ວທຸລະກິດບໍລິການໃນນະຄອນຫຼວງພະບາງມີຄວາມຄິດເຫັນຕໍ່ການປະຕິບັດນະໂຍບາຍ ແລະ ມາດຕະການຄວບຄຸມການລະບາດຂອງໂລກພະຍາດອັກເສບປອດສາຍພັນໃໝ່ (Covid-19) ຂອງລັດຖະບານ ແມ່ນຢູ່ໃນລະດັບຫຼາຍ. ໃນນັ້ນທຸລະກິດບໍລິການໃນນະຄອນຫຼວງພະບາງມີຄວາມຄິດເຫັນຕໍ່ການປະຕິບັດມາດຕະການຄວບຄຸມຂອງລັດຖະບານ ຢູ່ໃນລະດັບຫຼາຍ ແລະ ທຸລະກິດບໍລິການໃນນະຄອນຫຼວງພະບາງມີຄວາມຄິດເຫັນຕໍ່ການປະຕິບັດນະໂຍບາຍຂອງລັດຖະບານ ຢູ່ໃນລະດັບຫຼາຍ ສອດຄ່ອງກັບ Best (1977: 169) ບອກເຖິງຄວາມຄິດເຫັນກໍ່ຄືການສະແດງໃຫ້ເຫັນຈຳນວນສ່ວນຮ້ອຍຂອງຄຳຕອບໃນແຕ່ລະຂໍ້ຄວາມ ເພື່ອຈະເປັນການສະແດງໃຫ້ເຫັນວ່າ ຄວາມຄິດເຫັນຈະອອກມາລັກສະນະແບບໃດ ແລະ ສາມາດປະຕິບັດຕາມຂໍ້ຄວາມຄິດເຫັນເຫຼົ່ານັ້ນໄດ້ ຫຼື ຈະໃຊ້ໃນການວາງນະໂຍບາຍຕ່າງໆກໍ່ຕາມ. ດັ່ງນັ້ນຈາກການສຶກສາທີ່ໃຫ້ຜູ້ປະກອບການສະແດງຄວາມຄິດເຫັນເປັນຄ່າສະເລ່ຍຈິ່ງສອດຄ່ອງກັບ ການສຶກສາໃນຈຸດປະສົງນີ້ ໂດຍພົບວ່າ ທຸລະກິດບໍລິການໃນນະຄອນຫຼວງພະບາງ ມີຄວາມຄິດເຫັນຕໍ່ການປະຕິບັດມາດຕະການຄວບຄຸມຂອງລັດຖະບານ ຢູ່ໃນລະດັບຫຼາຍ ໂດຍສະເພາະ ມາດຕະການຫ້າມບຸກຄົນເດີນທາງໄປທ້ອງຖິ່ນອື່ນ ຫຼື ເຂດທີ່ມີການຕິດເຊື້ອ ຫຼື ເຂດທີ່ມີຄວາມສ່ຽງ ຍົກເວັ້ນຜູ້ທີ່ໄດ້ຮັບອະນຸຍາດຈາກອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຍ້ອນເຫດຜົນຈຳເປັນເຊັ່ນ: ຂົນສົ່ງສິນຄ້າ,ໄປໂຮງຫມໍ, ມາດຕະການປິດດ່ານປະເພນີ ແລະ ດ່ານທ້ອງຖິ່ນຢ່າງເຂັ້ມງວດເດັດຂາດ ແລະ ໃຫ້ປິດດ່ານສາກົນທັງຫມົດ, ມາດຕະການປິດກິດຈະການຮ້ານບັນເທີງ, ຮ້ານຄາຣາໂອເກະ, ຮ້ານເບຍ,ຮ້ານບໍລິການນວດ ແລະ ສະປາທຸກປະເພດ, ສະຖານທີ່ອອກກຳລັງກາຍ ແລະ ຫຼິ້ນກິລາ,ຕະຫຼາດກາງຄືນ, ໂຮງງານຕັດຫຍິບ,ໂຮງງານອື່ນໆ ແລະ ບັນດາໂຄງການໃຫຍ່ທີ່ມີຄວາມສ່ຽງໃນການລະບາດ, ຍົກເວັ້ນໂຮງງານຜະລິດສິນຄ້າບໍລິໂພກ,ຢາປົວພະຍາດ, ເຄື່ອງປ້ອງກັນການລະບາດ ແລະ ອຸປະກອນການແພດ. ສະແດງໃຫ້ເຫັນວ່າຜູ້ໃຫ້ຂໍ້ມູນເຫັນດີໃນການປະຕິບັດມາດຕະການຄວບຄຸມຂອງລັດຖະບານ ເຊິ່ງສອດຄ່ອງກັບ Piriya Dolp (2563) ທີ່ບອກວ່າ : ການຕັດສິນໃຈຍົກເລີກກິດຈະກຳຕ່າງໆທີ່ຈະສົ່ງຜົນກະທົບຕໍ່ການແຜ່ກະຈາຍເຊື້ອໄວຣັສດັ່ງກ່າວ ເຊັ່ນ: 1) ລັດຖະບານໃນຫຼາຍປະເທດທີ່ຕັດສິນໃຈປິດປະເທດ / ປິດນະຄອນ ແລະ ຫ້າມການເດີນທາງລະຫວ່າງປະເທດ, 2) ການປະກາດວ່າທຸລະກິດ ຫຼື ສະຖານທີ່ບໍລິການທີ່ຮັບເອົາຄົນເປັນຈຳນວນຫຼວງຫຼາຍຕ້ອງຖືກປິດເປັນການຊົ່ວຄາວ. 3) ສະຖາບັນການສຶກສາທີ່ຕ້ອງຢຸດການຮຽນ - ການສອນ (ເຖິງແມ່ນວ່າຄຳແນະນຳທາງອິນເຕີເນັດໄດ້ມາຊ່ວຍ) ແລະ 4) ຄົນທີ່ຕ້ອງຮັກສາຕົວເອງຢູ່ເຮືອນດ້ວຍເຫດຜົນຕ່າງໆໃນຄວາມພະຍາຍາມທີ່ຈະຄວບຄຸມການແຜ່ກະຈາຍຂອງໄວຣັດ Covid-19, ເຊິ່ງຢຸດກິດຈະກຳຕ່າງໆ. ສິ່ງນີ້ຈະສົ່ງຜົນກະທົບຕໍ່ຂະແໜງການທ່ອງທ່ຽວ, ຄົມມະນາຄົມຂົນສົ່ງ ແລະ ຂາຍຍ່ອຍ ແລະ ຈະສົ່ງຜົນກະທົບຕໍ່ອຸດສະຫະກຳທັງໝົດ. ສຳລັບຄວາມຄິດເຫັນຕໍ່ການປະຕິບັດນະໂຍບາຍຂອງລັດຖະບານ ຢູ່ໃນລະດັບຫຼາຍ ໂດຍສະເພາະການປະຕິບັດນະໂຍບາຍໃຫ້ຍົກເວັ້ນພາສີ-ອາກອນ ແລະ ຄ່າທຳນຽມຕ່າງໆໃນການນຳເຂົ້າທຸກປະເພດສິນຄ້າ ທີ່ນຳໃຊ້ເຂົ້າໃນວຽກງານສະກັດກັ້ນ,ກັນການລະບາດ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດ COVID-19 ເຊັ່ນ: ຜ້າປິດປາກ-ດັງ,ນ້ຳຢາລ້າງມື,ເຄື່ອງອຸປະກອນການແພດ ແລະ ອື່ນໆ ທີ່ຈຳເປັນ, ການປະຕິບັດນະໂຍບາຍຍົກເວັ້ນການເກັບອາກອນລາຍໄດ້ຈາກເງິນເດືອນຂອງຜູ້ອອກແຮງງານທັງຫມົດທັງພາກລັດ ແລະ ເອກະຊົນ ທີ່ມີລາຍຮັບ 5 ລ້ານກີບລົງມາ. ສະແດງວ່າ ມາດຕາ 01: ເຫັນດີປະຕິບັດນະໂຍບາຍ ແລະ ມາດຕະການ ເພື່ອຫຼຸດຜ່ອນຜົນກະທົບຈາກການລະບາດ ຂອງພະຍາດ

(COVID-19) ຕໍ່ເສດຖະກິດຂອງລາວ. ແມ່ນມີຄວາມສອດຄອງໃນການປະຕິບັດ.

## 5. ສະຫຼຸບ

ຜົນກະທົບຂອງໂລກພະຍາດອັກເສບປອດສາຍພັນໃໝ່ ໄວລັດໂຄໂລນາ (Covid-19) ຕໍ່ກັບທຸລະກິດບໍລິການທາງການທ່ອງທ່ຽວພາຍໃນ ນະຄອນຫຼວງພະບາງ ພົບວ່າ: ໂດຍລວມແລ້ວທຸລະກິດບໍລິການໃນ ນະຄອນຫຼວງພະບາງ ໄດ້ຮັບຜົນກະທົບຈາກການລະບາດຂອງໂລກພະຍາດອັກເສບປອດສາຍພັນໃໝ່ (Covid-19) ທາງດ້ານເສດຖະກິດ ຢູ່ໃນລະດັບຫຼາຍ ສ່ວນດ້ານສັງຄົມ ພົບວ່າ ໂດຍລວມແລ້ວທຸລະກິດບໍລິການໃນ ນະຄອນຫຼວງພະບາງ ໄດ້ຮັບຜົນກະທົບຈາກການລະບາດຂອງໂລກພະຍາດອັກເສບປອດສາຍພັນໃໝ່ (Covid-19) ຢູ່ໃນລະດັບຫຼາຍເຊັ່ນດຽວກັນ.

ໂດຍລວມແລ້ວທຸລະກິດບໍລິການໃນ ນະຄອນຫຼວງພະບາງ ມີຄວາມຄິດເຫັນຕໍ່ການປະຕິບັດນະໂຍບາຍຂອງລັດຖະບານ ເພື່ອຫຼຸດຜ່ອນຜົນກະທົບຂອງການລະບາດໂລກພະຍາດອັກເສບປອດສາຍພັນໃໝ່ (Covid-19) ແມ່ນຢູ່ໃນລະດັບຫຼາຍ ແລະ ທຸລະກິດບໍລິການມີຄວາມຄິດເຫັນຕໍ່ການປະຕິບັດມາດຕະການຄວບຄຸມການລະບາດໂລກພະຍາດອັກເສບປອດສາຍພັນໃໝ່ (Covid-19) ຂອງລັດຖະບານ ແມ່ນຢູ່ໃນລະດັບຫຼາຍ.

ສໍາລັບແນວທາງໃນການປັບຕົວຕໍ່ຜົນກະທົບຂອງທຸລະກິດບໍລິການໃນອານາຄົດທັງພາກລັດ ແລະ ເອກະຊົນແມ່ນຕ້ອງໄດ້ມີການຮ່ວມມືກັນໃນການປະຕິບັດນະໂຍບາຍ ແລະ ລະບຽບຕ່າງໆເພື່ອຫຼຸດຜ່ອນຄວາມຮຸນແຮງທີ່ສ້າງຜົນກະທົບທາງດ້ານນອກໃຫ້ກັບທຸລະກິດບໍລິການ, ພາກສ່ວນລັດປຶກສາຫາລືແຈ້ງກັບພາກສ່ວນທີ່ກ່ຽວຂ້ອງໃນການສ້າງລະບຽບ ແລະ ນະໂຍບາຍທີ່ສອດຄອງ ແລະ ເຂົ້າເຖິງບັນດາທຸລະກິດຕ່າງໆໃຫ້ເໝາະສົມ. ສໍາລັບດ້ານເສດຖະກິດ ທາງພາກລັດກໍຄວນອອກນະໂຍບາຍຊຸກຍູ້ ແລະ ສົ່ງເສີມເພື່ອໃຫ້ຜູ້ປະກອບການກິດຈະການບໍລິການດ້ານການທ່ອງທ່ຽວແຕ່ລະປະເພດໃຫ້ເໝາະສົມໂດຍມີການສ່ວນຮ່ວມມືຂອງພາກສ່ວນທະນາຄານຄວນມີນະໂຍບາຍຍືດອາຍຸການສໍາລະອັດຕາດອກເບ້ຍກູ້ຢືມໃຫ້ບັນດາຫົວໜ່ວຍທຸລະກິດທີ່ໄດ້ຮັບຜົນກະທົບຈາກໂຄວິດ-19; ດ້ານສັງຄົມ: ການເອົາໃຈໃສ່ຂອງພັກລັດໃນການຊັກວັກຊີນທີ່ທົ່ວເຖິງສາມາດເຂົ້າເຖິງທຸກຊັ້ນຄົນ ແລະ ໃຫ້ການຕິດຕໍ່ປະສານງານໃນກໍລະນີຕ້ອງການຄວາມຊ່ວຍເຫຼືອໃຫ້ທວງທັນເວລາ, ຄວນແບ່ງໜ້າທີ່ຄວາມນັບຜິດຊອບຕາມລໍາດັບຂັ້ນເພື່ອໃຫ້ງ່າຍ ແລະ ເຂົ້າເຖິງໄດ້ ແລະ ທຸກພາກສ່ວນກໍຄວນໃຫ້ຄວາມຮ່ວມມືໃນການປ້ອງກັນຕົນເອງໂດຍສະເພາະເອົາໃສ່ໃຈໃນການຮັກສາໄລຍະຫ່າງ, ໃສ່ໜ້າກາກອານາໄມ, ລ້າງມືດ້ວຍເຈວລ້າງມືຕະຫຼອດເພື່ອລົບລ້າງການຕິດເຊື້ອ ເພື່ອປ້ອງກັນຕົນເອງ.

## 6. ຂໍ້ຂັດແຍ່ງ

ພວກເຮົາ (ທີມງານນັກຄົ້ນຄວ້າ) ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດໃດໆທັງນັ້ນ, ກໍລະນີ ມີການລະເມີດ ໃນຮູບການໃດກໍ່ຕາມ ພວກເຮົາມີຄວາມຍິນດີ ຂໍຮັບຜິດຊອບແຕ່ພຽງຝ່າຍດຽວ, ຂໍຂອບໃຈມາຍັງຜູ້ໃຫ້ທຶນ ໂດຍສະເພາະແມ່ນທຶນການຄົ້ນຄ້ວາຂອງລັດຖະບານກໍຄືມະຫາວິທະຍາໄລສຸວັງໃນປີ 2020.

## 7. ເອກະສານອ້າງອີງ

ກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ 2013) ນະຄອນຫຼວງວຽງຈັນ: ສະພາແຫ່ງຊາດ.

ສະພາແຫ່ງຊາດ. (2005). ກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ) ປີ 2013.

ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດ ລາວ ນະຄອນຫຼວງວຽງຈັນ, ວັນທີ 18 ພຶດສະພາ 2020.

Soyfa Sisaard. (2009). Studying the impact of foreign investment on investors in the service sector, Bachelor's degree in Economics, Suophanouvong University.

Department of Information, Culture and Tourism, Vientiane. (2021). Summary of activities in 2020.

Primpha Charoenthong et al., (2011). The impact of tourism on the environment in the municipality of Luang Prabang, Department of Tourism Management, Souphanouvong University

Vivanxay Bounpak. (1999). Tourism has an impact on the national economy or the local economy with tourism and hotel businesses. Documents from the Department of Information, Culture and Tourism.

Wannida Singpraseth, Sonthawi, and Khamla Voraphet. (2009). Study: The impact of

tourism on the socio-economic aspect of Luang Prabang province. Bachelor's Degree in Tourism Management, Souphanouvong University.

Wimada Saiken. (2016). The impact of tourism on the lifestyle of the people in the village, district and Rayong province of Thailand.

Asma Srimarak. (2008). Study topic: The impact of tourism on cultural-social changes in Hundred City, Vietnam, which has been recognized as a World Heritage City.

Phongmanu Deod. (2020). The impact of the outbreak of covid-19 on the hospital business.

Pariya Dolp. (2563). Concept of the type of impact. www.digital_collect.lib.buu.ac.th 1.7.2021

Jirayakon Masavatdee. (2020). Opinion survey on confidence in the prevention of Covid-19 (Covid-19) of the people in the third phase of the southern border, Thailand.

Phonxay. (2020). The effect of using English skills on the work performance of employees in a 5-star hotel in Prabang capital, Luang Prabang province, Bachelor's degree in Hotel Management, Suphanu Vong University (cited in Anan Get Tuvong (1989:26-27).

Hospitality Business. SWISS Education Group, World Travel and Tourism Council: WTCC.

Adaptation. Wikipidia.com 31.7.2022, Weiten, W; Lloyd, MA(2008). Psychology Applied to Modern Life (9th ed.). Wadsworth Cengage Learning. ISBN 0-495-55339-5)

ຕາຕະລາງທີ 1. ຜົນການວິເຄາະຄ່າສະເລ່ຍລວມ, ຄ່າຜັນປ່ຽນມາດຕະຖານລວມ ແລະ ລະດັບຜົນກະທົບຂອງໂລກພະຍາດອັກເສບປອດສາຍພັນໃໝ່ (Covid-19) ຕໍ່ກັບທຸລະກິດບໍລິການ ມີ 2 ດ້ານ ດັ່ງນີ້:

n = 283

| ລ/ດ | ຜົນກະທົບຂອງໂລກພະຍາດອັກເສບປອດສາຍພັນໃໝ່ (Covid-19) ຕໍ່ກັບທຸລະກິດບໍລິການ | ຄ່າສະເລ່ຍ ($\bar{X}$) | ຄ່າຜັນປ່ຽນມາດຕະຖານ (S.D) | ລະດັບຜົນກະທົບ |
|---|---|---|---|---|
| **1** | **ຜົນກະທົບທາງດ້ານເສດຖະກິດ** | **3.66** | **0.61** | **ຫຼາຍ** |
| 1.1 | ຜົນກະທົບດ້ານບວກ | 3.15 | 0.80 | ປານກາງ |
| 1.2 | ຜົນກະທົບດ້ານລົບ | 4.18 | 0.78 | ຫຼາຍ |
| **2** | **ຜົນກະທົບທາງດ້ານສັງຄົມ** | **4.10** | **0,67** | **ຫຼາຍ** |
| 2.1 | ຜົນກະທົບດ້ານບວກ | 4.02 | 0.89 | ຫຼາຍ |
| 2.2 | ຜົນກະທົບດ້ານລົບ | 4.18 | 0.69 | ຫຼາຍ |
| **ລວມ** | | **3.88** | **0.57** | **ຫຼາຍ** |

ຕາຕະລາງທີ 2. ຜົນການວິເຄາະຄ່າສະເລ່ຍລວມ, ຄ່າຜັນປ່ຽນມາດຕະຖານລວມ ແລະ ລະດັບຄວາມຄິດເຫັນຂອງຜູ້ປະກອບການຕໍ່ນະໂຍບາຍ ແລະ ມາດຕະການຄວບຄຸມການລະບາດຂອງໂລກພະຍາດອັກເສບປອດສາຍພັນໃໝ່ (Covid-19) ຂອງລັດຖະບານມີ 2 ດ້ານ ດັ່ງນີ້:

n = 283

| ລ/ດ | ຄວາມຄິດເຫັນຂອງຜູ້ປະກອບການຕໍ່ນະໂຍບາຍ ແລະ ມາດຕະການຄວບຄຸມການລະບາດ | ຄ່າສະເລ່ຍ ($\bar{X}$) | ຄ່າຜັນປ່ຽນມາດຕະຖານ (S.D) | ລະດັບຄວາມຄິດເຫັນ |
|---|---|---|---|---|
| 1 | ການປະຕິບັດນະໂຍບາຍ | 3.51 | 0.90 | ຫຼາຍ |
| 2 | ການປະຕິບັດມາດຕະການຄວບຄຸມ | 3.90 | 0.81 | ຫຼາຍ |
| **ລວມ** | | **3.71** | **0.78** | **ຫຼາຍ** |